ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ

ເລກທີ 0282 /ກວຕ

ນະຄອນຫລວງວຽງຈັນ, ວັນທີ 26 FEB 2018

# ຂໍ້ຕົກລົງ

## ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກົມແຜນການ ແລະ ຮ່ວມມື

- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ສະບັບເລກທີ 314/ນຍ, ລົງວັນທີ 29 ກັນຍາ 2017 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງວິທະຍາສາດ ແລະເຕັກໂນໂລຊີ.
- ອີງຕາມ ການສະເໜີ ຂອງກົມແຜນການ ແລະ ຮ່ວມມື ໂດຍຜ່ານການຄົ້ນຄວ້າ ແລະ ເຫັນດີ ຂອງຄະນະປັບປຸງກົງຈັກການຈັດຕັ້ງ ຂອງກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ຄັ້ງວັນທີ 17 ພະຈິກ 2017.
- ອີງຕາມ ການເຫັນດີເປັນເອກະພາບ ຂອງກອງປະຊຸມຄະນະພັກ, ຄະນະນຳ ກະຊວງວິທະຍາສາດ ແລະເຕັກໂນໂລຊີ ຄັ້ງວັນທີ 24 ພະຈິກ 2017.

### ລັດຖະມົນຕີ ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ.**

ຂໍ້ຕົກລົງສະບັບນີ້ ກຳນົດລະອຽດກ່ຽວກັບທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ, ຫຼັກການ ແລະ ແບບແຜນວິທີເຮັດວຽກ ຂອງກົມແຜນການ ແລະ ຮ່ວມມື ເພື່ອເປັນບ່ອນອີງໃນການຈັດຕັ້ງ ແລະ ການເຄື່ອນໄຫວປະຕິບັດໜ້າທີ່ການເມືອງຂອງຕົນ, ແນ່ໃສ່ຈັດຕັ້ງປະຕິບັດແນວທາງນະໂຍບາຍຂອງພັກ ແລະ ລັດຖະບານ, ແຜນການ, ແຜນງານ ແລະ ໂຄງການ ຂອງກະຊວງກ່ຽວກັບວຽກງານແຜນການ, ປະເມີນຜົນ ແລະ ຮ່ວມມື ໃນຂະແໜງວິທະຍາສາດ ແລະ ເຕັກໂນໂລຊີ ໃນຂອບເຂດທົ່ວປະເທດ.

**ມາດຕາ 2. ທີ່ຕັ້ງ ແລະ ພາລະບົດບາດ.**

ກົມແຜນການ ແລະ ຮ່ວມມື ຂຽນເປັນຕົວອັກສອນຫຍໍ້ວ່າ "**ກຜຮ**" ສັງກັດໃນໂຄງປະກອບກົງຈັກການຈັດຕັ້ງ ຂອງກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ມີພາລະບົດບາດເປັນເສນາທິການໃຫ້ແກ່ຄະນະພັກ, ຄະນະນຳກະຊວງ ໃນການສ້າງແຜນຍຸດທະສາດ, ນະໂຍບາຍການປະເມີນຜົນ ແລະ ການຮ່ວມມືໃນຂອບເຂດທົ່ວປະເທດ ທີ່ກ່ຽວກັບວຽກງານ ຂອງກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ຮັບຜິດຊອບ.

# ໝວດທີ 2
# ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3. ໜ້າທີ່.**

ກົມແຜນການ ແລະ ຮ່ວມມື ມີໜ້າທີ່ດັ່ງນີ້:

3.1. ປະຕິບັດ ຕາມມະຕິຕົກລົງ ຂອງຄະນະພັກ, ຄະນະນຳກະຊວງ ແລະ ນິຕິກຳຕ່າງໆ ຂອງກະຊວງ;

3.2. ສຶກສາ, ຄົ້ນຄວ້າ ແລະ ຜັນຂະຫຍາຍ ແນວທາງ-ນະໂຍບາຍ ຂອງພັກ ແລະ ລັດຖະບານ; ແຜນການ, ແຜນງານ ຂອງກະຊວງໃຫ້ເປັນອັນລະອຽດ ຂອງກົມ ແລະ ຮັບຜິດຊອບໃນການຈັດຕັ້ງປະຕິບັດ ໃຫ້ມີປະສິດທິຜົນສູງ;

3.3. ເປັນເສນາທິການ ແລະ ຈຸດປະສານງານ ໃຫ້ກະຊວງໃນວຽກງານແຜນການ, ປະເມີນຜົນ ແລະ ຮ່ວມມື;

3.4. ຄົ້ນຄວ້າ, ສັງລວມ ແລະ ສ້າງແຜນເຄື່ອນໄຫວວຽກງານແຜນການ, ປະເມີນຜົນ ແລະ ຮ່ວມມື ໄລຍະສັ້ນ (ປະຈຳປີ) ແລະ ແຜນການໄລຍະກາງ (ແຜນ 5 ປີ) ຂອງກະຊວງ ພ້ອມທັງຕິດຕາມ, ປະເມີນຜົນ ແລະ ສະຫຼຸບລາຍງານ ການຈັດຕັ້ງປະຕິບັດ ປະຈຳ 3 ເດືອນ, 6 ເດືອນ, 1 ປີ, 5 ປີ;

3.5. ຄົ້ນຄວ້າ, ສັງລວມ ແລະ ສ້າງລະບົບຂໍ້ມູນວຽກງານແຜນການ, ປະເມີນຜົນ ແລະ ຮ່ວມມື;

3.6. ເຜີຍແຜ່ບັນດານິຕິກຳ ແລະ ເອກະສານຕ່າງໆທີ່ກ່ຽວຂ້ອງກັບວຽກງານແຜນການ, ປະເມີນຜົນ ແລະ ຮ່ວມມື;

3.7. ສຶກສາ, ຄົ້ນຄວ້າ ບັນດາສົນທິສັນຍາ, ສັນຍາ, ອານຸສັນຍາ, ຂໍ້ຕົກລົງ, ນະໂຍບາຍ, ຍຸດທະສາດ ແຜນງານການຮ່ວມມື ດ້ານວິທະຍາສາດ ແລະ ເຕັກໂນໂລຊີ ຂອງຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ເພື່ອກຳນົດແຜນການຮ່ວມມືສອງຝ່າຍ ແລະ ຫຼາຍຝ່າຍ ໃຫ້ສອດຄ່ອງກັບແນວທາງນະໂຍບາຍຂອງພັກ ແລະ ລັດຖະບານ;

3.8. ເປັນເສນາທິການໃຫ້ແກ່ກະຊວງໃນການຄົ້ນຄວ້າ ແລະ ປະກອບຄຳເຫັນທາງດ້ານເນື້ອໃນຕໍ່ການພົບປະ, ການປະຊຸມ, ການເຈລະຈາ, ການເຊັນສັນຍາ ແລະ ເອກະສານຕ່າງໆ ໃນຂົງເຂດວຽກງານວິທະຍາສາດ ແລະ ເຕັກໂນໂລຊີ, ພ້ອມທັງເຂົ້າຮ່ວມອຳນວຍຄວາມສະດວກ ແລະ ເຮັດບົດບັນທຶກ ຫຼື ເຊັນເອກະສານທີ່ກ່ຽວຂ້ອງຕາມການມອບໝາຍຂອງກະຊວງ;

3.9. ຕິດຕາມ, ຊຸກຍູ້ ແລະ ສົ່ງເສີມການຈັດຕັ້ງປະຕິບັດວຽກງານວິທະຍາສາດ ແລະ ເຕັກໂນໂລຊີ ຂອງທ້ອງຖິ່ນ;

3.10. ສຶກສາ, ອົບຮົມ ແລະ ຍົກລະດັບພະນັກງານຂອງກົມເປັນແຕ່ລະໄລຍະ;

3.11. ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍ ຂອງຄະນະນຳກະຊວງ.

**ມາດຕາ 4. ຂອບເຂດສິດ.**

ກົມແຜນການ ແລະ ຮ່ວມມື ມີສິດ ດັ່ງນີ້:

4.1. ອອກຂໍ້ຕົກລົງ, ແຈ້ງການ, ບົດແນະນຳ ແລະ ໜັງສືທາງລັດຖະການຕ່າງໆໃນຂອບເຂດຄວາມຮັບຜິດຊອບຕາມພາລະບົດບາດໜ້າທີ່ ແລະ ຂອບເຂດສິດຂອງກົມ;

4.2. ຄົ້ນຄວ້າ ແລະ ສະເໜີ ກ່ຽວກັບການປັບປຸງ ຫລື ຍຸບເລີກການຈັດຕັ້ງຂັ້ນຕ່າງໆ ທີ່ຂຶ້ນກັບກົມ;

4.3. ຄົ້ນຄວ້າ, ສະເໜີບັນຈຸ, ຊັບຊ້ອນ, ແຕ່ງຕັ້ງ, ເລື່ອນຕຳແໜ່ງ, ຍົກຍ້າຍໜ້າທີ່, ໃສ່ວິໄນ, ປົດຕຳແໜ່ງ ແລະ ປະຕິບັດນະໂຍບາຍຕໍ່ພະນັກງານທີ່ຂຶ້ນກັບການຄຸ້ມຄອງ ຂອງກົມ;